ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283

# ໜ່ວຍພັກ ກອງທຶນປົກປ້ອງຜູ້ຝາກເງິນ ຕີລາຄາຜົນການຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ຂັ້ນຂອງຕົນ




ໜ່ວຍພັກກອງທຶນປົກປ້ອງຜູ້ຝາກເງິນ ໄດ້ຈັດຕັ້ງກອງປະຊຸມສະຫຼຸບຕີລາຄາການຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ ຄັ້ງທີ II ຂັ້ນຂອງຕົນ ເຊິ່ງຈັດຂຶ້ນໃນຕອນແລງຂອງວັນທີ 2 ເມສາ 2018 ທີ່ຫ້ອງປະຊຸມທະນາຄານແຫ່ງ ສປປ ລາວ ນະຄອນຫຼວງວຽງຈັນ. ໂດຍການເປັນປະທານຂອງສະຫາຍນາງ ແສງດາວວີ ວົງຄຳຊາວ ເລຂາໜ່ວຍພັກ-ຜູ້ອຳນວຍການກອງທຶນປົກປ້ອງຜູ້ຝາກເງິນ ແລະ ໂດຍການໃຫ້ກຽດເຂົ້າຮ່ວມຂອງສະຫາຍ ສອນໄຊ ສິດພະໄຊ ກຳມະການສຳຮອງສູນກາງພັກ, ຄະນະປະຈຳພັກ-ຮອງຜູ້ວ່າການທະນາຄານແຫ່ງ ສປປ ລາວ, ພ້ອມນີ້ ກໍມີບັນດາຜູ້ຕາງໜ້າຄະນະໜ່ວຍພັກຮາກຖານ-ຄະນະໜ່ວຍພັກທີ່ຂຶ້ນກັບອົງຄະນະພັກ ທຫລ, 3 ອົງການຈັດຕັ້ງມະຫາຊົນທະນາຄານແຫ່ງ ສປປ ລາວ ແລະ ສະມາຊິກພັກ ກອງທຶນປົກປ້ອງຜູ້ຝາກເງິນ ເຂົ້າຮ່ວມ.

ກອງປະຊຸມໃນຄັ້ງນີ້ ຍັງໄດ້ພ້ອມກັນສັງເກດຕີລາຄາຄືນ ການຊີ້ນຳ-ນຳພາຂອງຄະນະໜ່ວຍພັກ ໃນໄລຍະຜ່ານມາ ແລະ ກອງປະຊຸມ ຍັງໄດ້ສຸມໃສ່ຄົ້ນຄວ້າ, ພິຈາລະນາ, ປະກອບຄຳເຫັນ ແລະ ຮັບຮອງເອົາບົດສະຫຼຸບ ຕີລາຄາການຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ ຄັ້ງທີ II ຂອງໜ່ວຍພັກກອງທຶນປົກປ້ອງຜູ້ຝາກເງິນ ແລະ ກຳນົດທິດທາງໜ້າທີ່ໃນຕໍ່ໜ້າ ໂດຍບັນດາຜູ້ແທນຂອງກອງປະຊຸມໄດ້ສຸມສະຕິປັນຍາຄົ້ນຄ້ວາ ແລະ ເປັນເອກະພາບຕໍ່ບົດສະຫຼຸບຕີລາຄາການຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ຂອງຕົນ ແລະ ທິດທາງແຜນການເຄື່ອນໄຫວ 2 ປີ ຕໍ່ໜ້າ.

ກອງປະຊຸມ ໄດ້ດຳເນີນໄປທ່າມກາງການຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ ຄັ້ງທີ X ຂອງພັກ, ມະຕິກອງປະຊຸມໃຫຍ່ ຄັ້ງທີ III ຂອງອົງຄະນະພັກທະນາຄານແຫ່ງ ສປປ ລາວ; ການປະຕິບັດຂໍ້ແຂ່ງຂັນຮັກຊາດ ແລະ ພັດທະນາ ຕິດພັນກັບການຮັກສາສະຖຽນລະພາບເງິນຕາແຫ່ງຊາດ ແລະ ວຽກງານ 3 ສ້າງ; ຄຽງຄູ່ກັນນັ້ນ ໂດຍສືບຕໍ່ກອງປະຊຸມສະຫຼຸບ ຕີລາຄາການຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ ຄັ້ງທີ II ໃນປີ 2017 ຜ່ານມາຂອງໜ່ວຍພັກກອງທຶນປົກປ້ອງຜູ້ຝາກເງິນ, ການຈັດຕັ້ງໜ່ວຍພັກ ແມ່ນໄດ້ມີການເຕີບໃຫຍ່ຂະຫຍາຍຕົວ ແລະ ຈຳນວນຂອງສະມາຊິກພັກໄດ້ມີການເພີ່ມຂຶ້ນ ເພື່ອໃຫ້ສອດຄ່ອງກັບກົດລະບຽບຂອງພັກວາງອອກ ແລະ ສົມຄູ່ກັບໜ້າທີ່ການເມືອງຂອງໜ່ວຍພັກກອງທຶນປົກປ້ອງຜູ້ຝາກເງິນ.

ໃນໄລຍະການກະກຽມໃຫ້ແກ່ກອງປະຊຸມສະຫຼຸບ ຕີລາຄາການຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ໃນເທື່ອນີ້, ໜ່ວຍພັກກອງທຶນປົກປ້ອງຜູ້ຝາກເງິນ ກໍໄດ້ມີການເປີດບັ້ນດຳເນີນຊີວິດການເມືອງ ເພື່ອຕີລາຄາຈັດປະເພດສະມາຊິກພັກ ແລະ ໜ່ວຍພັກຕິດພັນກັບການກໍ່ສ້າງໜ່ວຍພັກແຂງ-ຮູ້ນຳພາຮອບດ້ານ ແລະ ປັບປຸງກົງຈັກການຈັດຕັ້ງ, ສັບຊ້ອນພະນັກງານໃຫ້ມີຄວາມຄ່ອງຕົວເໝາະສົມ ແລະ ພ້ອມນັ້ນ ຍັງໄດ້ເອົາໃຈໃສ່ສ້າງຂະບວນການທາງດ້ານວິຊາສະເພາະ, ຂະບວນການທາງດ້ານກິລາ ແລະ ດ້ານອື່ນໆ.

ໃນໂອກາດດັ່ງກ່າວ, ສະຫາຍ ສອນໄຊ ສິດພະໄຊ ຄະນະປະຈຳພັກ-ຮອງຜູ້ວ່າການທະນາຄານແຫ່ງ ສປປ ລາວ ໄດ້ໃຫ້ກຽດໂອ້ລົມ ແລະ ມີທິດຊີ້ນຳ ໂດຍເນັ້ນໃຫ້ຄະນະໜ່ວຍພັກ-ສະມາຊິກພັກໃນກອງທຶນປົກປ້ອງຜູ້ຝາກເງິນ ຈົ່ງພ້ອມກັນເສີມຂະຫຍາຍມູນເຊື້ອອັນດີເດັ່ນຂອງຕົນເຂົ້າໃນການຈັດຕັ້ງປະຕິບັດໜ້າທີ່ການເມືອງໃນແຕ່ລະໄລຍະໃຫ້ປະກົດຜົນສຳເລັດສູງຂຶ້ນເປັນກ້າວໆ; ພ້ອມດຽວກັນນັ້ນ ກໍຕ້ອງມີການປັບປຸງ ແລະ ແກ້ໄຂຂໍ້ຄົງຄ້າງໃນໄລຍະຜ່ານມາໃຫ້ດີຂຶ້ນຢ່າງບໍ່ຢຸດຢັ້ງ.

**# ຂ່າວ-ພາບ: ຣັດສະໝີ ດວງສັດຈະ**

# ແລກປ່ຽນເງິນຕາຊະຊາຍ ຜິດລະບຽບກົດໝາຍບ້ານເມືອງ